**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

**ຄະນະປະຈຳ**

ເລກທີ 190 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 27 / 06 / 23

# ມະຕິ
## ຂອງ ຄະນະປະຈຳສະພາແຫ່ງຊາດ
## ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ວ່າດ້ວຍ ການໃຫ້ສັດຕະຍາບັນແກ່ ສົນທິສັນຍາ ວ່າດ້ວຍການກຳນົດຊາຍແດນປະເທດ ລະຫ່ວາງ ສປປ ລາວ ແລະ ຣາຊະອານາຈັກ ກຳປູເຈຍ

---

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015, ມາດຕາ 56 ຂໍ້ 6 ກ່ຽວກັບສິດ ແລະ ໜ້າທີ່ ຂອງ ຄະນະປະຈຳສະພາແຫ່ງຊາດ ໃນການຕົກລົງໃຫ້ສັດຕະຍາບັນແກ່ ສົນທິສັນຍາ ແລະ ສັນຍາສາກົນ ຕາມການສະເໜີຂອງ ທ່ານ ນາຍົກລັດຖະມົນຕີ;
- ອີງຕາມ ໜັງສືສະເໜີຂອງ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 37/ນຍ, ລົງວັນທີ 16 ພຶດສະພາ 2023;
- ອີງຕາມ ການຕົກລົງຂອງ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 22 ມິຖຸນາ 2023.

**ຄະນະປະຈຳສະພາແຫ່ງຊາດຕົກລົງ:**

**ມາດຕາ 1** ເຫັນດີໃຫ້ສັດຕະຍາບັນແກ່ ສົນທິສັນຍາ ວ່າດ້ວຍ ການກຳນົດຊາຍແດນປະເທດ ລະຫ່ວາງ ສປປ ລາວ ແລະ ຣາຊະອານາຈັກ ກຳປູເຈຍ.

**ມາດຕາ 2** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈຳສະພາແຫ່ງຊາດ**

**ປະທານ**

ປອ ໄຊສົມພອນ ພົມວິຫານ